Australian Government

BE COVIDSAFE

ໂຄວິດ -19 (COVID- -19) ການລະບຸອາການສະແດງ

ອາການ	ໂຄວິດ - 19 (COVID-19): ອາການສະແດງ ມີຕັ້ງແຕ່ເບົາບາງ ເຖິງຮຸນແຮງ	ເປັນຫວັດ ການເລີ່ມຕົ້ນຂອງອາການເທື່ອລະໜ້ອຍ	ໄຂ້ຫວັດໃຫຍ່ ການເລີ່ມຕົ້ນຂອງອາການກະທັນຫັນ	ພູມແພ້* ອາດຈະກະທັນຫັນ ຫຼື ມີການເລີ່ມຕົ້ນຂອງອາການເທື່ອລະໜ້ອຍ
ໄຂ້	ທົ່ວໄປ	ບໍ່ຄ່ອຍມີ	ທົ່ວໄປ	ບໍ່
ໄອ	ທົ່ວໄປ	ທົ່ວໄປ	ທົ່ວໄປ	ທົ່ວໄປ (ຫອບຫືດ)
ເຈັບຄໍ	ບາງຄັ້ງ	ທົ່ວໄປ	ບາງຄັ້ງ	ບາງຄັ້ງ (ຄັນຄໍ ແລະ ເພດານປາກ)
ຫາຍໃຈບໍ່ອີ່ມ	ບາງຄັ້ງ	ບໍ່	ບໍ່	ທົ່ວໄປ (ຫອບຫືດ)
ອິດເມື່ອຍ	ບາງຄັ້ງ	ບາງຄັ້ງ	ທົ່ວໄປ	ບາງຄັ້ງ
ເຈັບ ແລະ ປວດ	ບາງຄັ້ງ	ບໍ່	ທົ່ວໄປ	ບໍ່
ເຈັບຫົວ	ບາງຄັ້ງ	ທົ່ວໄປ	ທົ່ວໄປ	ບາງຄັ້ງ
ນ້ຳມູກໄຫຼ ຫຼື ຕັນດັງ	ບາງຄັ້ງ	ທົ່ວໄປ	ບາງຄັ້ງ	ທົ່ວໄປ
ຖອກທ້ອງ	ບໍ່ຄ່ອຍມີ	ບໍ່	ບາງຄັ້ງ, ໂດຍສະເພາະແມ່ນສຳລັບເດັກນ້ອຍ	ບໍ່
ຈາມ	ບໍ່	ທົ່ວໄປ	ບໍ່	ທົ່ວໄປ

*ດັດປັບມາຈາກເອກະສານທີ່ສ້າງຂຶ້ນໂດຍ WHO; ສູນຄວບຄຸມ ແລະ ປ້ອງກັນພະຍາດຂອງສະຫະລັດ ແລະ ສະຖາບັນພູມແພ້, ຫອບພືດ ແລະ ພູມຕ້ານທານວິທະຍາອາເມລິກາ. *ພູມແພ້ທາງລະບົບຫາຍໃຈລວມມີການແພ້ຈາກເຍື່ອຫຸ້ມດັງອັກເສບ (ໄຂ້ຈາມ) ແລະ ຫອບຫືດພູມແພ້. ອາການທົ່ວໄປອັນອື່ນຂອງການເປັນໄຂ້ຈາມລວມມີການຄັນດັງ ແລະ ອາການຄັນ, ນ້ຳຕາຊຶມ. ມັນຍາກຫຼາຍທີ່ຈະຈຳແນກຄວາມແຕກຕ່າງລະຫວ່າງອາການຂອງ COVID-19, ໄຂ້ຫວັດໃຫຍ່ ແລະ ໄຂ້ຫວັດ. ຖ້າທ່ານມີອາການຕິດເຊື້ອ ຫຼື ທາງລະບົບຫາຍໃຈໃດໜຶ່ງ (ເຊັ່ນ: ເຈັບຄໍ, ເຈັບຫົວ, ເປັນໄຂ້, ຫາຍໃຈບໍ່ອີ່ມ, ເຈັບກ້າມຊີ້ນ, ໄອ ຫຼື ນ້ຳມູກໄຫຼ) ຢ່າໄປວຽກ. ທ່ານຈຳເປັນຕ້ອງໄດ້ແຍກຕົວເອງ ແລະ ໃຫ້ຜູ້ຊ່ຽວຊານທາງການແພດປະເມີນ. ທ່ານອາດຈຳເປັນຕ້ອງໄດ້ກວດຫາ COVID-19. ທ່ານຕ້ອງບໍ່ກັບໄປເຮັດວຽກຈົນກວ່າໄດ້ຮັບການຢັ້ງຢືນໂດຍຜູ້ຊ່ຽວຊານທາງການແພດ. ທ່ານຈຳເປັນຕ້ອງໄດ້ຮັບປະກັນວ່າ ຄົນທີ່ທ່ານດູແລເອົາໃຈໃສ່ໄດ້ຮັບການປົກປ້ອງ ແລະ ປອດໄພ. ຄົນຜູ້ທີ່ມີອາການພູມແພ້ທາງລະບົບຫາຍໃຈ ເຊັ່ນ: ການແພ້ຈາກເຍື່ອຫຸ້ມດັງອັກເສບ (ໄຂ້ຈາມ) ແລະ ຫອບຫືດພູມແພ້ຄວນຈະພັກຢູ່ເຮືອນ ແລະ ກວດຫາ COVID-19 ໃນຕອນເລີ່ມຕົ້ນມີອາການ ແລະ ຖ້າພວກເຂົາມີອາການທີ່ບໍ່ຄາດຄິດ, ເຫັນວ່າແຕກຕ່າງ ຫຼື ຮຸນແຮງໄປກວ່າປົກກະຕິ ຫຼື ບໍ່ຕອບສະໜອງຕໍ່ຢາປົກກະຕິຂອງພວກເຂົາ.*

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໄວຣັດໂຄໂຣນາ (COVID-19) ໄປທີ່ health.gov.au
ເຂົ້າເບິ່ງ www.health.gov.au/resources/translated ຫຼື ສຳລັບບໍລິການແປພາສາ ຫຼື ແປປາກເປົ່າ, ໃຫ້ໂທຫາເບີ 131 450.

DTDT0001045